ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4359/ກປ

ນະຄອນຫຼວງວຽງຈັນ, ວັນທີ 16 AUG 2024

# ຂໍ້ຕົກລົງ
# ວ່າດ້ວຍ ການສຳຫຼວດປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 3953/ກປມ, ລົງວັນທີ 24 ກໍລະກົດ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຫ້ອງການ ສະບັບເລກທີ 2862/ຫກ, ລົງວັນທີ 07 ສິງຫາ 2024.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສຳຫຼວດປ່າໄມ້ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ວຽກງານສຳຫຼວດປ່າໄມ້ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ, ມີປະສິດທິພາບ, ປະສິດທິຜົນສູງ ຮັບປະກັນໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການສຳຫຼວດປ່າໄມ້**

ການສຳຫຼວດປ່າໄມ້ ແມ່ນ ການເກັບກຳຂໍ້ມູນ, ຕີລາຄາສະພາບປ່າໄມ້, ການປະເມີນຄວາມປົກຫຸ້ມປ່າໄມ້, ການປ່ຽນແປງການນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ຊະນິດພັນໄມ້, ບໍລິມາດໄມ້, ຊີວະມວນສານ, ປະລິມານ ການສະສົມກາກບອນໃນປ່າໄມ້, ໄມ້ສືບພັນ ແລະ ເຄື່ອງປ່າຂອງດົງ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ການສຸ່ມຕົວຢ່າງ** ໝາຍເຖິງ ການກຳນົດພື້ນທີ່ສຳຫຼວດເກັບກຳຂໍ້ມູນ ເພື່ອເປັນຕົວແທນເນື້ອທີ່ທັງໝົດ;

**2. ຄຸ້ມທີ່ຈະຂຸດຄົ້ນໄມ້** ໝາຍເຖິງ ພື້ນທີ່ໜຶ່ງ ທີ່ໄດ້ກຳນົດຕາມຮອບວຽນຕັດຟັນ ໃຫ້ເປັນເຂດຂຸດຄົ້ນໄມ້ ໃນເຂດປ່າຜະລິດ ທີ່ມີບໍລິມາດໄມ້ ຫົກສິບ (60) ແມັດກ້ອນ ຂຶ້ນໄປ;

**3. ທີ່ດິນປ່າໄມ້** ໝາຍເຖິງ ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;

**4. ການຈະເລີນເຕີບໂຕຂອງປ່າໄມ້** ໝາຍເຖິງ ການເພີ່ມຂຶ້ນຂອງບໍລິມາດໄມ້ ຂອງຕົ້ນໄມ້ທຸກຊະນິດໃນພື້ນທີ່ປ່າໄມ້ ໂດຍການປະເມີນເປັນແມັດກ້ອນຕໍ່ເຮັກຕາຕໍ່ປີ.

**ມາດຕາ 4 ຫຼັກການ**

ການສຳຫຼວດປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດປ່າໄມ້ ແລະ ລະບຽບການ;

2. ຮັບປະກັນຜົນປະໂຫຍດຂອງ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ປົກປັກຮັກສາ, ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມກົດໝາຍ;

3. ຮັບປະກັນການມີສ່ວນຮ່ວມ ກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

4. ຮັບປະກັນມາດຕະຖານທາງດ້ານເຕັກນິກວິຊາການ ກ່ຽວກັບການສຳຫຼວດປ່າໄມ້ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;

5. ສະໜອງຂໍ້ມູນ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີປະສິດທິຜົນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວ ກ່ຽວກັບວຽກງານການສຳຫຼວດປ່າໄມ້ ຕາມຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ປະເພດການສຳຫຼວດປ່າໄມ້

**ມາດຕາ 6 ປະເພດການສຳຫຼວດປ່າໄມ້**

ການສຳຫຼວດປ່າໄມ້ ປະກອບມີ ສິບ (10) ປະເພດ ດັ່ງນີ້:

1. ການສຳຫຼວດຄວາມປົກຫຸ້ມປ່າໄມ້;
2. ການສຳຫຼວດປ່າໄມ້ແຫ່ງຊາດ;
3. ການສຳຫຼວດປ່າປ້ອງກັນ;
4. ການສຳຫຼວດປ່າສະຫງວນ;
5. ການສຳຫຼວດປ່າຜະລິດ;
6. ການສຳຫຼວດກຳນົດເຂດຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ;
7. ການສຳຫຼວດປ່າໄມ້ເຂດທັບປ້ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ;
8. ການສຳຫຼວດ ເພື່ອຂຸດຄົ້ນເຄື່ອງປ່າຂອງດົງ;
9. ການສຳຫຼວດໄມ້ ເພື່ອເປັນພະລັງງານ;
10. ການສຳຫຼວດການຈະເລີນເຕີບໂຕຂອງປ່າໄມ້.

**ມາດຕາ 7 ການສຳຫຼວດຄວາມປົກຫຸ້ມປ່າໄມ້**

ການສຳຫຼວດຄວາມປົກຫຸ້ມປ່າໄມ້ ແມ່ນ ແນໃສ່ຕີລາຄາ ທ່າອ່ຽງລວມ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້, ການປ່ຽນແປງ ຂອງປ່າໄມ້ ແລະ ເນື້ອທີ່ປ່າໄມ້ ໃນ ລະດັບຊາດ ແລະ ລະດັບພາກ ໂດຍປະຕິບັດ ດັ່ງນີ້:

1. ນຳໃຊ້ພາບຖ່າຍ ເພື່ອຈຳແນກ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ;

2. ປຽບທຽບຂໍ້ມູນ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ ແລະ ໄລຍະຜ່ານມາ;

3. ສຸ່ມຕົວຢ່າງແບບຈຳແນກຊັ້ນ ເພື່ອສຳຫຼວດເກັບກຳຂໍ້ມູນ ບໍ່ໃຫ້ເກີນ ສິບສ່ວນຮ້ອຍ (10%) ໃນເຂດທີ່ມີການປ່ຽນແປງ;

4. ສຳຫຼວດເກັບກຳ ແລະ ວິເຄາະ ຂໍ້ມູນ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ;

5. ການສຳຫຼວດຄວາມປົກຫຸ້ມປ່າໄມ້ ຕ້ອງດຳເນີນບໍ່ເກີນ ຫ້າ (5) ປີຕໍ່ຄັ້ງ.

**ມາດຕາ 8 ການສຳຫຼວດປ່າໄມ້ແຫ່ງຊາດ**

ການສຳຫຼວດປ່າໄມ້ແຫ່ງຊາດ ແມ່ນການສຳຫຼວດປະເມີນ ຄວາມໜາແໜ້ນທາງດ້ານບໍລິມາດໄມ້ ແລະ ປະລິມານ ການສະສົມມວນສານກາກບອນໃນປ່າໄມ້ ໂດຍປະຕິບັດ ດັ່ງນີ້:

1. ນຳໃຊ້ພາບຖ່າຍ ເພື່ອຈຳແນກ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ;
2. ສຸ່ມຕົວຢ່າງ ເພື່ອສຳຫຼວດເກັບກຳຂໍ້ມູນ ບໍ່ເກີນ ສູນຈຸດຫ້າສ່ວນຮ້ອຍ (0,5%) ຂອງເນື້ອທີ່ປ່າໄມ້ທັງໝົດ;
3. ສຳຫຼວດເກັບກຳ ແລະ ວິເຄາະ ຂໍ້ມູນ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້, ໂຄງສ້າງຂອງປ່າ, ຄວາມປົກຫຸ້ມປ່າໄມ້, ຊະນິດພັນໄມ້, ໄມ້ສືບພັນ, ຕໍໄມ້, ເຄື່ອງປ່າຂອງດົງ ແລະ ຂໍ້ມູນອື່ນ;
4. ການສຳຫຼວດປ່າໄມ້ແຫ່ງຊາດ ຕ້ອງດຳເນີນ ບໍ່ເກີນ ຫ້າ (5) ປີຕໍ່ຄັ້ງ.

**ມາດຕາ 9 ການສຳຫຼວດປ່າປ້ອງກັນ**

ການສຳຫຼວດປ່າປ້ອງກັນ ແມ່ນການສຳຫຼວດເກັບກຳຂໍ້ມູນ ເພື່ອກຳນົດຂອບເຂດ ແລະ ຈັດສັນ ບົນພື້ນຖານການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍປະຕິບັດ ດັ່ງນີ້:

1. ນຳໃຊ້ພາບຖ່າຍ ເພື່ອຈຳແນກ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ;
2. ສຸ່ມຕົວຢ່າງ ເພື່ອສຳຫຼວດເກັບກຳຂໍ້ມູນຢ່າງໜ້ອຍ ໜຶ່ງສ່ວນຮ້ອຍ (1%) ຂອງຈຳນວນເນື້ອທີ່ທັງໝົດ;
3. ການສຳຫຼວດກຳນົດໝາຍຂອບເຂດ ຕ້ອງດຳເນີນການສຳຫຼວດເກັບກຳຂໍ້ມູນ ກ່ຽວກັບ ຄຸນລັກສະນະທາງດ້ານ ພູມິສາດ, ປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ, ສະພາບປ່າໄມ້, ແຫຼ່ງນ້ຳ, ອ່າງຮັບນ້ຳ, ອ່າງເກັບນ້ຳ ແລະ ເສດຖະກິດ-ສັງຄົມຂອງບ້ານ ເພື່ອກຳນົດລະດັບປ່າປ້ອງກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6, 7, 8 ແລະ 9 ຂອງດຳລັດ ວ່າດ້ວຍປ່າປ້ອງກັນ ສະບັບເລກທີ 01/ລບ, ລົງວັນທີ 04 ມັງກອນ 2024 ໂດຍບໍ່ລວມເອົາເນື້ອທີ່ທີ່ໄດ້ຈັດສັນໃຫ້ປະຊາຊົນຄຸ້ມຄອງ ແລະ ນຳໃຊ້;
4. ການສຳຫຼວດຈັດສັນປ່າປ້ອງກັນ ຕ້ອງດຳເນີນການ ເກັບກຳ ແລະ ວິເຄາະ ຂໍ້ມູນ ກ່ຽວກັບ ສະພາບພື້ນທີ່, ຊີວະນາໆພັນ, ລະບົບນິເວດ, ເນື້ອທີ່ປົກຫຸ້ມປ່າໄມ້, ມວນສານທາດອາຍກາກໂບນິກ, ຊະນິດພັນສັດນ້ຳ, ສັດປ່າ ແລະ ເຄື່ອງປ່າຂອງດົງ, ແຫຼ່ງນ້ຳ, ປ່າແຄມນ້ຳ, ປ່າແຄມທາງ, ການນຳໃຊ້ທີ່ດິນ ແລະ ເສດຖະກິດ-ສັງຄົມ, ຄວາມສຳຄັນທາງດ້ານປະຫວັດສາດ, ວັດທະນະທຳ ເພື່ອຈັດສັນພື້ນທີ່ເປັນ ເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງນຳໃຊ້ ໂດຍເປັນເອກະພາບກັບ ຂະແໜງການ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ປະຊາຊົນ.

**ມາດຕາ 10 ການສຳຫຼວດປ່າສະຫງວນ**

ການສຳຫຼວດປ່າສະຫງວນ ແມ່ນການສຳຫຼວດເກັບກຳຂໍ້ມູນ ເພື່ອກຳນົດຂອບເຂດ, ຈັດສັນ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໂດຍປະຕິບັດ ດັ່ງນີ້:

1. ນຳໃຊ້ພາບຖ່າຍ ເພື່ອຈຳແນກ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ;
2. ສຸ່ມຕົວຢ່າງສຳຫຼວດເກັບກຳຂໍ້ມູນ ຢ່າງໜ້ອຍ ໜຶ່ງສ່ວນຮ້ອຍ (1%) ຂຶ້ນໄປ ຂອງຈຳນວນທັງໝົດ;
3. ການກຳນົດຂອບເຂດ ຕ້ອງດຳເນີນການສຳຫຼວດເກັບກຳຂໍ້ມູນ ກ່ຽວກັບ ຄຸນລັກສະນະຂອງພື້ນທີ່, ຊີວະນາໆພັນ ແລະ ເສດຖະກິດ-ສັງຄົມຂອງບ້ານ ເພື່ອການກຳນົດລະດັບປ່າສະຫງວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6, 7, 8 ແລະ ມາດຕາ 9 ຂອງ ດຳລັດ ວ່າດ້ວຍປ່າສະຫງວນ ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023 ໂດຍບໍ່ລວມເອົາເນື້ອທີ່ທີ່ໄດ້ຈັດສັນໃຫ້ປະຊາຊົນຄຸ້ມຄອງ ແລະ ນຳໃຊ້ ໂດຍເປັນເອກະພາບກັບຂະແໜງ ການ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ປະຊາຊົນ;
4. ການຈັດສັນປ່າສະຫງວນ ຕ້ອງດຳເນີນການສຳຫຼວດເກັບກຳ ແລະ ວິເຄາະ ຂໍ້ມູນກ່ຽວກັບ ສະພາບປ່າໄມ້, ຊີວະນາໆພັນ, ລະບົບນິເວດ, ເນື້ອທີ່ປົກຫຸ້ມປ່າໄມ້, ມວນສານທາດອາຍກາກໂບນິກ, ຊະນິດພັນສັດນ້ຳ, ສັດປ່າ, ພືດພັນ ແລະ ເຄື່ອງປ່າຂອງດົງ, ແຫຼ່ງນ້ຳ, ການນຳໃຊ້ທີ່ດິນ, ຂໍ້ຂັດແຍ່ງລະຫວ່າງຄົນກັບສັດປ່າ, ເສດຖະກິດ-ສັງຄົມ, ຄວາມສຳຄັນທາງດ້ານປະຫວັດສາດ ແລະ ວັດທະນະທຳ ເພື່ອກຳນົດເປັນ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ແລະ ເຂດກັນຊົນ;

5. ສຳຫຼວດຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ (ພືດ ແລະ ສັດ);
6. ສຳຫຼວດປ່າໄມ້ ເຂດແຫຼ່ງທ່ອງທ່ຽວ.

**ມາດຕາ 11 ການສຳຫຼວດປ່າຜະລິດ**

ການສຳຫຼວດປ່າຜະລິດ ແມ່ນການເກັບກຳ ແລະ ວິເຄາະຂໍ້ມູນ ກ່ຽວກັບ ຄຸນລັກສະນະຂອງພື້ນທີ່, ສະພາບປ່າໄມ້, ການນຳໃຊ້ທີ່ດິນ ແລະ ປ່າໄມ້, ຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ, ເສດຖະກິດ-ສັງຄົມຂອງບ້ານ ແລະ ຂໍ້ມູນອື່ນທີ່ຈຳເປັນ ຊຶ່ງປະກອບມີ ຫ້າ (5) ການສຳຫຼວດ ດັ່ງນີ້:

**1. ການສຳຫຼວດກຳນົດໝາຍຂອບເຂດ**

- ນຳໃຊ້ພາບຖ່າຍ ເພື່ອຈຳແນກ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ;
- ເກັບກຳຂໍ້ມູນ ກ່ຽວກັບ ຄຸນລັກສະນະຂອງພື້ນທີ່, ສະພາບປ່າໄມ້, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນປ່າໄມ້ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ;
- ບໍ່ນອນໃນເຂດປ່າປ້ອງກັນ, ປ່າສະຫງວນ, ຫ່າງຈາກຊາຍແດນ ລະຫວ່າງຊາດ ຢ່າງໜ້ອຍ ຫ້າ (5) ກິໂລແມັດ;
- ມີເນື້ອທີ່ ຢ່າງໜ້ອຍ ຫ້າພັນ (5.000) ເຮັກຕາ;
- ບໍ່ລວມເອົາເນື້ອທີ່ທີ່ໄດ້ຈັດສັນໃຫ້ປະຊາຊົນຄຸ້ມຄອງ ແລະ ນຳໃຊ້;
- ເອກະພາບກັບ ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ປະຊາຊົນ.

**2. ການສຳຫຼວດຈັດສັນປ່າຜະລິດ**

- ນຳໃຊ້ພາບຖ່າຍ ເພື່ອຈຳແນກ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ;
- ສຸ່ມຕົວຢ່າງ ແບບຈຳແນກຊັ້ນ ສາມສ່ວນຮ້ອຍ (3%) ຂອງເນື້ອທີ່ ປ່າດົງດິບ, ປ່າຜັດໃບປະສົມ, ປ່າໄມ້ໃບເຂັມ, ປ່າໄມ້ໃບເຂັມປະສົມໃບກວ້າງ ແລະ ໜຶ່ງສ່ວນຮ້ອຍ (1%) ຂອງເນື້ອທີ່ປ່າໂຄກ, ປ່າໄມ້ປ້ອງ ແລະ ປ່າເຫຼົ່າ;
- ດຳເນີນການ ເກັບກຳ ແລະ ວິເຄາະ ຂໍ້ມູນ ກ່ຽວກັບ ສະພາບປ່າໄມ້, ການນຳໃຊ້ທີ່ດິນ ແລະ ປ່າໄມ້, ບໍລິມາດໄມ້, ຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ, ເສດຖະກິດ-ສັງຄົມ, ຮ່ອງຮອຍຂອງສັດປ່າ, ແຫຼ່ງທີ່ຢູ່ອາໄສຂອງສັດປ່າ ແລະ ຂໍ້ມູນທີ່ຈຳເປັນ;
- ກຳນົດເປັນ ເຂດທີ່ສາມາດຂຸດຄົ້ນໄມ້ ທີ່ມີບໍລິມາດໄມ້ຂັ້ນໜ້າຕ້າງ ຊາວ (20) ຊັງຕີແມັດຂຶ້ນໄປ ເກີນ ຫົກສິບ (60) ແມັດກ້ອນຕໍ່ເຮັກຕາ, ເຂດຟື້ນຟູປ່າໄມ້ ທີ່ມີບໍລິມາດໄມ້ ລະຫວ່າງ ຊາວ ຫາ ຫົກສິບ (20-60) ແມັດກ້ອນຕໍ່ເຮັກຕາ, ເຂດປູກໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ ໃນເຂດທີ່ດິນປ່າຊຸດໂຊມ ແລະ ປອກໂຫຼ້ນ ທີ່ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ບໍ່ເກີນ ສິບ ສ່ວນຮ້ອຍ (10%) ແລະ ບໍລິມາດໄມ້ຕ່ຳກ່ວາ ຊາວ (20) ແມັດກ້ອນຕໍ່ເຮັກຕາ, ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ ທີ່ເປັນທີ່ດິນປ່າໄມ້ແຄມນ້ຳ, ເຂດຍອດນ້ຳ, ແຫຼ່ງນ້ຳ, ເຂດທີ່ມີຄວາມຄ້ອຍຊັນສູງ ສາມສິບຫ້າ (35) ອົງສາຂຶ້ນໄປ ແລະ ແຫຼ່ງທີ່ຢູ່ອາໄສຂອງສັດປ່າທີ່ຫາຍາກ ແລະ ໃກ້ຈະສູນພັນ;
- ປັບປຸງແຜນຈັດສັນ ໃນຮອບວຽນ ສິບຫ້າ (15) ປີ ຫຼື ສິ້ນສຸດການຂຸດຄົ້ນໄມ້.

**3. ການສຳຫຼວດກ່ອນການຂຸດຄົ້ນ**

- ສຸ່ມຕົວຢ່າງ ຫົກ ສ່ວນຮ້ອຍ (6%) ຂຶ້ນໄປ ສຳລັບຕົ້ນໄມ້ ທີ່ມີຂະໜາດວັດຮອບຕ່ຳກວ່າອະນຸຍາດຕັດປ້ຳຂຶ້ນໄປ ເພື່ອປະເມີນບໍລິມາດໄມ້ໃນການຄັດເລືອກຕົ້ນຕັດ;
- ເກັບກຳ ແລະ ວິເຄາະ ຂໍ້ມູນ ກ່ຽວກັບ ຕົ້ນໄມ້ທັງໝົດ ທີ່ມີໜ້າຕ້າງ ຫ້າສິບ (50) ຊັງຕີແມັດ ຂຶ້ນໄປ ລວມທັງໄມ້ຂະໜາດວັດຮອບອະນຸຍາດຕັດປ້ຳ ແລະ ຈຸດທີ່ຕັ້ງຂອງຕົ້ນໄມ້;
- ສ້າງແຜນການຂຸດຄົ້ນໄມ້.

**4. ການສຳຫຼວດໝາຍຕົ້ນຕັດ**

- ໝາຍຕົ້ນໄມ້ຖືກຄັດເລືອກທີ່ຈະຕັດ ໂດຍການແຕ້ມເບີຕົ້ນ, ແຕ້ມຈຸດຕັດໄມ້, ຕີກາຕົ້ນໄມ້ ແລະ ກຳນົດທິດລົ້ມຂອງຕົ້ນໄມ້;
- ສ້າງແຜນທີ່ຈຸດທີ່ຕັ້ງຂອງຕົ້ນໄມ້ທີ່ໄດ້ໝາຍ;
- ກຳນົດເສັ້ນທາງລາກແກ່ໄມ້.

**5. ການສຳຫຼວດຫຼັງການຂຸດຄົ້ນໄມ້**

- ສຳຫຼວດພາຍໃນ ຫົກ (6) ເດືອນ ຫຼັງຈາກສຳເລັດການຂຸດຄົ້ນໄມ້
- ສຸ່ມຕົວຢ່າງ ຢ່າງໜ້ອຍ ຫ້າສ່ວນຮ້ອຍ (5%);
- ເກັບກຳ ແລະ ວິເຄາະ ຂໍ້ມູນ ກ່ຽວກັບ ໄມ້ທີ່ຖືກຕັດ, ສິ່ງເສດເຫຼືອ ແລະ ສິ່ງອື່ນ;
- ປະເມີນຜົນກະທົບດ້ານທາງດ້ານຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ.

**ມາດຕາ 12 ການສຳຫຼວດກຳນົດເຂດ ຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ**

ເຂດທີ່ສາມາດຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ ຕ້ອງແມ່ນ ທີ່ດິນປ່າຊຸດໂຊມ ຫຼື ທີ່ດິນປ່າປອກໂຫຼ້ນ ທີ່ມີເນື້ອທີ່ ຢ່າງໜ້ອຍ ສາມ (3) ເຮັກຕາ ຕໍ່ຕອນ, ໄລຍະຫ່າງ ລະຫວ່າງຕອນ ຫາ ຕອນ ບໍ່ເກີນ ຫ້າຮ້ອຍ (500) ແມັດ ມີບໍລິມາດໄມ້ ທີ່ມີຂະໜາດໜ້າຕ້າງ ສິບ (10) ຊັງຕີແມັດ ຂຶ້ນໄປ ບໍ່ເກີນ ຊາວ (20) ແມັດກ້ອນ ຕໍ່ເຮັກຕາຕໍ່ຕອນ ແລະ ຈຳນວນຕົ້ນໄມ້ ທີ່ມີໜ້າຕ້າງ ນ້ອຍກວ່າ ສິບ (10) ຊັງຕີແມັດ ບໍ່ເກີນ ໜຶ່ງພັນ (1.000) ຕົ້ນຕໍ່ເຮັກຕາຕໍ່ຕອນ ໂດຍປະຕິບັດ ດັ່ງນີ້:

1. ນຳໃຊ້ພາບຖ່າຍ ເພື່ອກຳນົດພື້ນທີ່ ທີ່ດິນປ່າຊຸດໂຊມ ຫຼື ທີ່ດິນປ່າປອກໂຫຼ້ນ ເບື້ອງຕົ້ນ;
2. ສຸ່ມຕົວຢ່າງ ຢ່າງໜ້ອຍ ໜຶ່ງສ່ວນຮ້ອຍ (1%) ຂອງເນື້ອທີ່ທັງໝົດ;
3. ສຳຫຼວດເກັບກຳຂໍ້ມູນຂອບເຂດການນຳໃຊ້ທີ່ດິນປ່າໄມ້ທັງໝົດ;
4. ສຳຫຼວດເກັບກຳຂໍ້ມູນ ຕົ້ນໄມ້, ເສດຖະກິດ-ສັງຄົມ ແລະ ຢັ້ງຢືນ ພື້ນທີ່ເຂດທີ່ສາມາດຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ;
5. ວິເຄາະ ແລະ ຢັ້ງຢືນ ຂໍ້ມູນ ເພື່ອກຳນົດພື້ນທີ່ ຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ ໂດຍການເຫັນດີເອກະພາບກັບອົງການປົກຄອງທ້ອງຖິ່ນ.

**ມາດຕາ 13 ການສຳຫຼວດປ່າໄມ້ ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງໂຄງລ່າງພື້ນຖານ**

ການສຳຫຼວດ ເພື່ອຂຸດຄົ້ນໄມ້ ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງໂຄງລ່າງພື້ນຖານ ແມ່ນການຂຶ້ນບັນຊີຕົ້ນໄມ້ທັງໝົດ ແລະ ປະເມີນ ທາງດ້ານ ຈຳນວນ, ບໍລິມາດໄມ້ ແລະ ປະລິມານການສະສົມກາກບອນປ່າໄມ້ ໂດຍປະຕິບັດ ດັ່ງນີ້:

1. ກຳນົດພື້ນທີ່ປ່າໄມ້ຕົວຈິງ ໃນປະຈຸບັນ ໂດຍນຳໃຊ້ພາບຖ່າຍ ເພື່ອສຳຫຼວດເກັບກຳຂໍ້ມູນ;
2. ສຳຫຼວດເກັບກຳຂໍ້ມູນຕົ້ນໄມ້ ໃນຂອບເຂດ ແລວທາງ, ແລວສາຍສົ່ງ, ບໍ່ແຮ່, ຈັດສັນພູມລຳເນົາ, ຊົນລະປະທານ, ພະລັງງານລົມ, ພະລັງງານແສງຕາເວັນ ແລະ ເຂດອື່ນ ໂດຍການສຳຫຼວດເກັບກຳຂໍ້ມູນ ຕົ້ນໄມ້ທັງໝົດທີ່ມີໜ້າຕ້າງແຕ່ ຊາວ (20) ຊັງຕີແມັດ ຂຶ້ນໄປ ແລະ ຕົ້ນໄມ້ ທີ່ມີໜ້າຕ້າງນ້ອຍກວ່າ ຊາວ ຫາ ຫ້າ (20-5) ຊັງຕີແມັດ ໂດຍສຸ່ມຕົວຢ່າງສຳຫຼວດເກັບກຳຂໍ້ມູນ ໜຶ່ງສ່ວນຮ້ອຍ (1%) ຂອງເນື້ອທີ່ປ່າໄມ້ຕົວຈິງ;
3. ສຳຫຼວດເກັບກຳຂໍ້ມູນຕົ້ນໄມ້ ໃນຂອບເຂດອ່າງຮັບນ້ຳ ແລະ ອ່າງເກັບນ້ຳ ໂດຍການສຸ່ມຕົວຢ່າງສຳຫຼວດເກັບກຳຂໍ້ມູນ ບໍ່ເກີນ ສິບສ່ວນຮ້ອຍ (10%) ຂອງເນື້ອທີ່ປ່າໄມ້ຕົວຈິງ ເພື່ອເກັບກຳຂໍ້ມູນຕົ້ນໄມ້ ທີ່ມີຂົ້ນໜ້າຕ້າງ ຫ້າ (5) ຊັງຕີແມັດ ຂຶ້ນໄປ.

**ມາດຕາ 14 ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ**

ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ແມ່ນ ວຽກງານທີ່ຕິດພັນກັບການສຳຫຼວດເກັບກຳຂໍ້ມູນຕົ້ນໄມ້ ແລະ ການສຳຫຼວດ ເພື່ອຂຸດຄົ້ນທີ່ມີລັກສະນະເຈາະຈົງຊະນິດພັນເຄື່ອງປ່າຂອງດົງໃນເຂດກໍ່ສ້າງໂຄງ

ລ່າງພື້ນຖານ, ເຂດທັນປຽນທີ່ດິນປ່າໄມ້, ເຂດທີ່ລັດຈັດສັນໃຫ້ບ້ານນຳໃຊ້, ເຂດທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລັດມອບສິດໃຫ້ນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງຕາມກົດໝາຍ ໂດຍປະຕິບັດ ດັ່ງນີ້:

1. ກຳນົດຂອບເຂດ ແລະ ເນື້ອທີ່ ທີ່ມີເຄື່ອງປ່າຂອງດົງ ສຳລັບການສຳຫຼວດ ເພື່ອຊຸດຄົ້ນທີ່ມີລັກສະນະເຈາະຈົງຊະນິດພັນ;

2. ສຸ່ມຕົວຢ່າງສຳຫຼວດເກັບກຳຂໍ້ມູນ ບໍ່ເກີນ ສິບສ່ວນຮ້ອຍ (10%) ຂອງເນື້ອທີ່;

3. ສຳຫຼວດເກັບກຳ ແລະ ວິເຄາະ ຂໍ້ມູນ ກ່ຽວກັບ ຊະນິດພັນ, ຈຳນວນ ລຳ, ເສັ້ນ ແລະ ນ້ຳໜັກ.

**ມາດຕາ 15 ການສຳຫຼວດໄມ້ເພື່ອເປັນພະລັງງານ**

ການສຳຫຼວດໄມ້ເພື່ອເປັນພະລັງງານ ໃຫ້ດຳເນີນໃນ ເຂດປ່າຜະລິດທີ່ມີແຜນຈັດສັນ, ເຂດກໍ່ສ້າງໂຄງລ່າງພື້ນຖານ, ເຂດທັນປຽນທີ່ດິນປ່າໄມ້, ເຂດທີ່ລັດຈັດສັນໃຫ້ບ້ານນຳໃຊ້, ເຂດທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລັດມອບສິດໃຫ້ນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງຕາມກົດໝາຍ ໂດຍປະຕິບັດ ດັ່ງນີ້:

1. ກຳນົດຂອບເຂດ ແລະ ເນື້ອທີ່;

2. ສຸ່ມຕົວຢ່າງສຳຫຼວດເກັບກຳຂໍ້ມູນ ບໍ່ເກີນ ໜຶ່ງສ່ວນຮ້ອຍ (1%) ຂອງເນື້ອທີ່ທັງໝົດ;

3. ສຳຫຼວດເກັບກຳ ແລະ ວິເຄາະ ຂໍ້ມູນ ກ່ຽວກັບ ຊະນິດພັນ, ຈຳນວນ ແລະ ບໍລິມາດ.

**ມາດຕາ 16 ການສຳຫຼວດ ການຈະເລີນເຕີບໂຕຂອງປ່າໄມ້**

ການສຳຫຼວດ ການຈະເລີນເຕີບໂຕຂອງປ່າໄມ້ ແມ່ນການປະເມີນຂໍ້ມູນ ຕົ້ນໄມ້ ຊະນິດພັນໄມ້, ໜ້າຕ້າງ, ລວງສູງ ໂດຍປະຕິບັດ ດັ່ງນີ້:

1. ກຳນົດຂອບເຂດ ແລະ ເນື້ອທີ່ ສຳຫຼວດເກັບກຳຂໍ້ມູນ;

2. ກຳນົດ ຈຳນວນດອນຕົວຢ່າງຖາວອນ ຢ່າງໜ້ອຍ ສາມສິບ (30) ດອນ ຫຼື ອັດຕາສ່ວນການສຳຫຼວດທີ່ເໝາະສົມ;

3. ສຳຫຼວດເກັບກຳ ແລະ ວິເຄາະ ຂໍ້ມູນ ຊັບພະຍາກອນປ່າໄມ້ ໃຫ້ດຳເນີນໜຶ່ງຄັ້ງຕໍ່ປີ ໃນໄລຍະຢ່າງໜ້ອຍ ສີ່ (4) ປີ ຕໍ່ເນື່ອງກັນ.

## ໝວດທີ 3
## ເງື່ອນໄຂ ແລະ ຂັ້ນຕອນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້

**ມາດຕາ 17 ເງື່ອນໄຂການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້**

ການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຕ້ອງຕາມກົດໝາຍ;
2. ຈຸດທີ່ຕັ້ງ ແລະ ຂອບເຂດໂຄງການທີ່ຈະແຈ້ງ;
3. ມີແຜນກິດຈະກຳຂອງໂຄງການ;
4. ມີງົບປະມານ.

**ມາດຕາ 18 ຂັ້ນຕອນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້**

ການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການສະເໜີ;
2. ການພິຈາລະນາ;
3. ການກະກຽມກ່ອນສຳຫຼວດ;
4. ການດຳເນີນການສຳຫຼວດ;

5. ການລາຍງານ ແລະ ຢັ້ງຢືນຜົນສຳຫຼວດ.

**ມາດຕາ 19 ການສະເໜີ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ມີຈຸດປະສົງສຳຫຼວດປ່າໄມ້ປະເພດຕ່າງໆ ໃຫ້ຍື່ນໜັງສືສະເໜີຂໍອະນຸຍາດ ນຳຂະແໜງການກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງດຳເນີນການສຳຫຼວດ.

ເອກະສານປະກອບການສະເໜີຂໍອະນຸຍາດສຳຫຼວດປ່າໄມ້ ມີ ດັ່ງນີ້:

1. ໜັງສືສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາຂະແໜງການກະສິກຳ ແລະ ປ່າໄມ້;
2. ສັນຍາ ລະຫວ່າງ ລັດຖະບານ ກັບ ໂຄງການ ຫຼື ສັນຍາພັດທະນາໂຄງການ;
3. ສຳເນົາ ໃບອະນຸຍາດລົງທຶນ (ທີ່ກ່ຽວຂ້ອງກັບກິດຈະການທີ່ຕົນຂໍສຶກສາ ຫຼື ພັດທະນາ);
4. ສຳເນົາ ຜົນການສຶກສາເບື້ອງຕົ້ນ;
5. ສຳເນົາ ສັນຍາ ເຊົ່າ ຫຼື ສຳປະທານ (ຖ້າມີ).

**ມາດຕາ 20 ການພິຈາລະນາ**

ພາຍຫຼັງໄດ້ຮັບໜັງສືສະເໜີ ແລະ ເອກະສານຄົບຖ້ວນແລ້ວ ຂະແໜງການກະສິກຳ ແລະ ປ່າໄມ້ ກວດກາຄວາມຖືກຕ້ອງ ຂອງເອກະສານ ແລະ ຂອບເຂດພື້ນທີ່ ໃສ່ກັບຖານຂໍ້ມູນປ່າໄມ້ແລ້ວ ຕ້ອງພິຈາລະນາອະນຸຍາດການສຳຫຼວດປ່າໄມ້ ຫຼື ປະຕິເສດການອະນຸຍາດ ເມື່ອເຫັນວ່າ ເອກະສານບໍ່ຄົບຖ້ວນ ຫຼື ບໍ່ສອດຄ່ອງ ໂດຍແຈ້ງຕອບເປັນລາຍລັກອັກສອນໃຫ້ແກ່ຜູ້ສະເໜີ ຮັບຊາບ ພາຍໃນ ສິບຫ້າ (15) ວັນ ລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ.

**ມາດຕາ 21 ການກະກຽມກ່ອນສຳຫຼວດ**

ພາຍຫຼັງໄດ້ຮັບອະນຸຍາດສຳຫຼວດປ່າໄມ້ແລ້ວ ຂະແໜງການກະສິກຳ ແລະ ປ່າໄມ້ ກະກຽມກ່ອນສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ຢ່າງຄົບຖ້ວນ ຄື: ວາງແຜນການສຳຫຼວດເກັບກຳຂໍ້ມູນ, ສ້າງແຜນງົບປະມານ, ຈຳນວນຄົນ, ເຄື່ອງມື, ພາຫະນະ ແລະ ຂໍ້ຕົກລົງແຕ່ງຕັ້ງພະນັກງານ.

**ມາດຕາ 22 ການດຳເນີນການສຳຫຼວດ**

ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມສິດ ແລະ ໜ້າທີ່ຂອງຕົນ ໂດຍປະຕິບັດຕາມຫຼັກການດ້ານວິຊາການໃນການສຳຫຼວດປ່າໄມ້ແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 2 ຂອງຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ການລາຍງານ ແລະ ຢັ້ງຢືນຜົນການສຳຫຼວດ**

ຄະນະທີມງານທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳເນີນການສຳຫຼວດປ່າໄມ້ ເປັນຜູ້ລາຍງານຜົນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອພິຈາລະນາ, ພ້ອມທັງຢັ້ງຢືນຜົນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ແກ່ຜູ້ສະເໜີຮັບຊາບ ພາຍໃນ ສິບ (10) ວັນລັດຖະການ ນັບແຕ່ວັນໄດ້ຮັບບົດລາຍງານຜົນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ເປັນຕົ້ນໄປ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການສຳຫຼວດ ປ່າໄມ້ ແລະ ທີ່ດິນປ່າໄມ້;

2. ຂັດຂວາງການເຄື່ອນໄຫວວຽກງານສຳຫຼວດ ປ່າໄມ້ ແລະ ທີ່ດິນປ່າໄມ້;
3. ໃຫ້ສິນບົນແກ່ ພະນັກງານ ແລະ ເຈົ້າໜ້າທີ່;
4. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມ ສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ອຳນາດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ຈັດຕັ້ງປະຕິບັດວຽກງານສຳຫຼວດປ່າໄມ້ ໃນທີ່ດິນປ່າໄມ້ຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ທວງເອົາ, ຂໍເອົາ, ຮັບສິນບົນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ;
4. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ ແລະ ຂາດຄວາມຮັບຜິດຊອບ ຕໍ່ການປະຕິບັດໜ້າທີ່;
5. ກົດໜ່ວງ, ຖ່ວງດຶງ ແລະ ປອມແປງ ເອກະສານ ແລະ ຂໍ້ມູນການສຳຫຼວດ;
6. ເປີດເຜີຍ ຄວາມລັບຂອງລັດ ຫຼື ທາງລັດຖະການ ກ່ຽວກັບປ່າໄມ້;
7. ໃຊ້ຄວາມຮຸນແຮງ, ບັງຂັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ ວຽກງານສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້

**ມາດຕາ 26 ການຄຸ້ມຄອງວຽກງານສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງວຽກງານສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ຢ່າງລວມສູນ ໂດຍມອບໃຫ້ກົມປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

ການຈັດຕັ້ງທີ່ຮັບຜິດຊອບ ວຽກງານສຳຫຼວດປ່າໄມ້ ປະກອບມີ:

1. ຂັ້ນສູນກາງ ແມ່ນ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້;
2. ຂັ້ນແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້;
3. ຂັ້ນເມືອງ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້**

ໃນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ກົມປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງລະບຽບການ ກ່ຽວກັບ ວຽກງານສຳຫຼວດປ່າໄມ້;
2. ຜັນຂະຫຍາຍວຽກງານສຳຫຼວດປ່າໄມ້ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ແລະ ຝຶກອົບຮົມ ກ່ຽວກັບ ວຽກງານສຳຫຼວດປ່າໄມ້;
4. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການສຳຫຼວດປ່າໄມ້;
5. ສຳຫຼວດ ຄວາມປົກຫຸ້ມປ່າໄມ້;
6. ສຳຫຼວດ ປ່າໄມ້ແຫ່ງຊາດ;
7. ສຳຫຼວດກຳນົດໝາຍຂອບເຂດ ແລະ ສຳຫຼວດຈັດສັນ ປ່າປ້ອງກັນແຫ່ງຊາດ, ປ່າສະຫງວນແຫ່ງຊາດ ແລະ ປ່າຜະລິດ;
8. ການສຳຫຼວດກຳນົດເຂດ ຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ, ການສຳຫຼວດປ່າໄມ້ ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ, ສຳຫຼວດ ເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ແລະ ສຳຫຼວດໄມ້ ເພື່ອເປັນພະລັງງານ ໃນເນື້ອທີ່ ແຕ່ໜຶ່ງຮ້ອຍ (100) ເຮັກຕາ ຂຶ້ນໄປ ຕໍ່ໜຶ່ງກິດຈະການ;

9. ການສຳຫຼວດການຈະເລີນເຕີບໂຕຂອງປ່າໄມ້;

10. ພິຈາລະນາ ຮັບຮອງ ຫຼື ຍົກເລີກ ການສຳຫຼວດປ່າໄມ້;

11. ສັງລວມ ຂໍ້ມູນ ຜົນຂອງການສຳຫຼວດປ່າໄມ້;

12. ສະຫຼຸບ ແລະ ລາຍງານຜົນການສຳຫຼວດປ່າໄມ້ ໃຫ້ກະຊວງກະສິກຳ ແລະ ປ່າໄມ້;

13. ສ້າງ, ບຳລຸງ, ຍົກລະດັບ ແລະ ນຳໃຊ້ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສຳຫຼວດປ່າໄມ້;

14. ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ລົງສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້;

15. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການສຳຫຼວດປ່າໄມ້;

16. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ໃນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີ ແລະ ຈັດຕັ້ງປະຕິບັດ ລະບຽບການ ກ່ຽວກັບ ວຽກງານສຳຫຼວດປ່າໄມ້;

2. ເຂົ້າຮ່ວມ ການໂຄສະນາ ເຜີຍແຜ່ ແລະ ຝຶກອົບຮົມ ກ່ຽວກັບ ວຽກງານສຳຫຼວດປ່າໄມ້;

3. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການສຳຫຼວດປ່າໄມ້;

4. ສຳຫຼວດ ປ່າປ້ອງກັນ ແລະ ປ່າສະຫງວນ ລະດັບແຂວງ;

5. ສຳຫຼວດກ່ອນການຂຸດຄົ້ນ, ສຳຫຼວດໝາຍຕົ້ນຕັດ ແລະ ສຳຫຼວດຫຼັງການຂຸດຄົ້ນໄມ້ ໃນເຂດປ່າຜະລິດ;

6. ການສຳຫຼວດກຳນົດເຂດ ຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ, ການສຳຫຼວດປ່າໄມ້ ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ, ສຳຫຼວດ ເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ແລະ ສຳຫຼວດໄມ້ ເພື່ອເປັນພະລັງງານ ໃນເນື້ອທີ່ແຕ່ ສາມສິບ ຫາ ຕ່ຳກວ່າໜຶ່ງຮ້ອຍ (30-<100) ເຮັກຕາ ຕໍ່ໜຶ່ງກິດຈະການ;

7. ມີສ່ວນຮ່ວມ ແລະ ຢັ້ງຢືນ ຮັບຮອງຜົນການສຳຫຼວດປ່າໄມ້;

8. ສ້າງ, ບຳລຸງ, ຍົກລະດັບ ແລະ ນຳໃຊ້ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສຳຫຼວດປ່າໄມ້;

9. ສະໜອງ ຂໍ້ມູນ ຜົນການສຳຫຼວດປ່າໄມ້, ຂອບເຂດ, ທີ່ຕັ້ງ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ກົມປ່າໄມ້ (ສູນຂໍ້ມູນຂ່າວສານປ່າໄມ້);

10. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບ ການສຳຫຼວດປ່າໄມ້;

11. ສະຫຼຸບ ແລະ ລາຍງານຜົນການສຳຫຼວດປ່າໄມ້ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ຂັ້ນແຂວງ;

12. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ໃນການສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີ ແລະ ຈັດຕັ້ງປະຕິບັດ ລະບຽບການ ກ່ຽວກັບ ວຽກງານສຳຫຼວດປ່າໄມ້;

2. ເຂົ້າຮ່ວມ ການໂຄສະນາ ເຜີຍແຜ່ ແລະ ຝຶກອົບຮົມ ກ່ຽວກັບ ວຽກງານສຳຫຼວດປ່າໄມ້;

3. ສຳຫຼວດ ປ່າປ້ອງກັນ ແລະ ປ່າສະຫງວນ ລະດັບ ເມືອງ ແລະ ບ້ານ;

4. ສຳຫຼວດກຳນົດເຂດ ຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ, ການສຳຫຼວດປ່າໄມ້ ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ, ສຳຫຼວດ ເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ແລະ ສຳຫຼວດໄມ້ ເພື່ອເປັນພະລັງງານ ໃນເນື້ອທີ່ຕ່ຳກວ່າ ສາມສິບ (<30) ເຮັກຕາ ຕໍ່ໜຶ່ງກິດຈະການ;

5. ມີສ່ວນຮ່ວມ ແລະ ຢັ້ງຢືນ ຜົນການສຳຫຼວດປ່າໄມ້;

6. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສຳຫຼວດປ່າໄມ້;

7. ສະໜອງ ຂໍ້ມູນ ຜົນການສຳຫຼວດປ່າໄມ້, ຂອບເຂດ, ທີ່ຕັ້ງ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ;

8. ຮ່ວມມື ກັບຕ່າງປະເທດ ກ່ຽວກັບ ການສຳຫຼວດປ່າໄມ້;

9. ສະຫຼຸບ ແລະ ລາຍງານຜົນການສຳຫຼວດປ່າໄມ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ;

10. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 30 ການຕິດຕາມ ກວດກາວຽກງານສຳຫຼວດປ່າໄມ້**

ການຕິດຕາມ ກວດກາ ວຽກງານສຳຫຼວດປ່າໄມ້ ແມ່ນ ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານສຳຫຼວດປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນຕົ້ນ ຈຸດທີ່ຕັ້ງ, ຂອບເຂດ, ເຕັກນິກດ້ານວິຊາການ, ການມີສ່ວນຮ່ວມໃນການສຳຫຼວດ, ຂໍ້ມູນຜົນການສຳຫຼວດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້. ສຳລັບ ການຕິດຕາມ ກວດກາ ໃຫ້ຈັດຕັ້ງປະຕິບັດ ພາຍຫຼັງທີມງານສຳຫຼວດ ດຳເນີນໄດ້ ປະມານ ເຈັດສິບສ່ວນຮ້ອຍ (70%).

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 31 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດວຽກງານສຳຫຼວດປ່າໄມ້ ແລະ ເຮັດໃຫ້ການຊົມໃຊ້ ຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້ ຖືກຕ້ອງຕາມຫຼັກວິຊາການ ແມ່ນຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມຄວາມເໝາະສົມ.

**ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 34 ຜົນສັກສິດ**

ຂໍ້ຕົກລົງ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ຕຸລາ 2024 ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍລະບຽບການສຳຫຼວດປ່າໄມ້ ສະບັບເລກທີ 0108/ກປ. 2005, ລົງວັນທີ 20 ເມສາ 2005.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ... ລັດຖະມົນຕີ

ລິນຄຳ ດວງສະຫວັນ